ຫຍ້າກີນີສີມ່ວງ ເປັນຫຍ້າທີ່ມີອາຍຸຫລາຍປີ ລັກສະນະລຳຕົ້ນເປັນກໍຕັ້ງຊື່ ແຕກກໍດີໃບດົກ ທົນຕໍ່ສະພາບຮົ່ມເງົາໄດ້ດີ ຈະເລີນເຕີບໂຕໃນພື້ນທີ່ສູງດິນໜຽວ ແລະ ດິນຊາຍ ມີການຕອບສະໜອງຕໍ່ການໃຫ້ນ້ຳ ແລະ ຝຸ່ນໄວ ສາມາດປູກ ຂະຫຍາຍພັນດ້ວຍເມັດ ແລະ ເຫງົ້າ ເໝາະສຳລັບປູກລ້ຽງສັດແບບຕັດໃຫ້ກິນ.

## ລະດູປູກ

ປູກໃນຕົ້ນລະດູຝົນ ຊ່ວງທີ່ເໝາະສົມທີ່ສຸດຄື: ເດືອນພຶດສະພາ ຫາ ເດືອນກໍລະກົດ ເປັນຊ່ວງທີ່ດິນຍັງມີຄວາມອົບອຸ່ນເໝາະສົມຕໍ່ການແຕກງອກຂອງເມັດ ແລະ ການຂະຫຍາຍຕົວຂອງຮາກຫຍ້າ.

## ການກຽມດິນ

ເລີ່ມໄຖບຸກເບີກໜ້າດິນເມື່ອມີຝົນຕົກໃນຊ່ວງກາງເດືອນເມສາ ເພື່ອປີ້ນໜ້າດິນກຳຈັດວັດສະພືດທີ່ປົກຄຸມດິນ ຕາກປະໄວ້ 3-4 ອາທິດ. ຫລັງຈາກນັ້ນ, ໄຖພວນດິນ ເທື່ອທີ 2-3 ເພື່ອທຳລາຍວັດສະພືດທີ່ຂຶ້ນມາໃໝ່ ພ້ອມທັງປັບສະພາບດິນໃຫ້ຮາບພຽງ ແລະ ເກັບເສດວັດສະພືດອອກຈາກພື້ນທີ່ເພື່ອກຽມປູກ.



*ໄຖພວນ 2-3 ເທື່ອໃຫ້ດິນມຸ່ນລະອຽດ*

## ວິທີປູກ

ເມັດຫຍ້າກີນີເປັນເມັດຫຍ້າກິ່ນຫອມ ເຊິ່ງເປັນທີ່ຕ້ອງການຂອງມົດ ແລະ ແມງໄມ້ຫລາຍທີ່ສຸດ. ດັ່ງນັ້ນ, ການປູກດ້ວຍເມັດໂດຍກົງອາດຈະບໍ່ໄດ້ຮັບຜົນ. ເອກະສານນີ້ຂໍແນະນຳການປູກໂດຍໃຊ້ຕົ້ນກ້າ.

**ການກ້າເມັດ:** ໃຊ້ເມັດພັນ 0.5 ກິໂລ ແຊ່ໃນນ້ຳຢາຍ້ອມມຸ້ງປະໄວ້ 1 ຄືນ ແລ້ວນຳໄປຫວ່ານໃນໜານກ້າທີ່ກຽມໄວ້ ໃນ ເນື້ອທີ່ 100 ມ$^2$ ໃຫ້ທົ່ວຢ່າງສະໝ່ຳສະເໝີ ໂຮຍທັບດ້ວຍຝຸ່ນ ຄອກ (ດີແທ້ໃຫ້ໃຊ້ຝຸ່ນຂີ້ໝູ) ປົກໜາປະມານ 0.5 ຊມ. ພ້ອມທັງຫົດນ້ຳໜານກ້າໃຫ້ມີຄວາມຊຸ່ມຢູ່ສະເໝີ ເມື່ອຕົ້ນກ້າມີອາຍຸ 1 ເດືອນ ກໍ່ສາມາດຍ້າຍໄປປູກໄດ້ ໃນເນື້ອທີ່ 1 ໄຮ່.



*ໜານກ້າ ຂະໜາດ 100 ມ$^2$*

**ການປູກ:** ໄລຍະຫ່າງ 50x50 ຊມ., ໃສ່ຫລຸມລະ 3 ຕົ້ນ ແລະ ຄວນປູກໃນຂະນະທີ່ດິນມີຄວາມຊຸ່ມເໝາະສົມ.

ຫຍ້າກີນີ ຍັງສາມາດ ປູກປະສົມປະສານກັບພືດອື່ນໄດ້ເຊັ່ນ: ປູກໃນສວນຢາງພາລາ ແລະ ປູກໃນສວນໄມ້ໃຫ້ໝາກອື່ນ ໆ...



*ປູກດ້ວຍຕົ້ນກ້າ ໄລຍະຫ່າງ 50 x50 ຊມ*

## ການໃສ່ຝຸ່ນ

ກ່ອນປູກຄວນໃສ່ຝຸ່ນຮອງພື້ນ ສູດ 15-15-15 ອັດຕາ 50 ກິໂລ/ໄຮ່ ອາດຈະໃສ່ຝຸ່ນຄອກຕື່ມອີກ ເພື່ອເພີ່ມ ອິນຊີວັດຖຸໃນດິນ ແລະ ໃສ່ປຸ໋ຍຢູເຣຍ (ສູດ 46-0-0) ອັດຕາ 10 ກິໂລ/ໄຮ່ ຫລັງການຕັດຫຍ້າທຸກເທື່ອ ໂດຍໂຮຍ ໃສ່ຕາມເຫງົ້າຫຍ້າທີ່ຕັດເທົ່ານັ້ນ. ໃນປີຕໍ່ໆ ໄປໃຫ້ໃສ່ປຸ໋ຍ ສູດ 15-15-15 ໃນຊ່ວງຕົ້ນລະດູຝົນ.

## ການກຳຈັດວັດສະພືດ

ຄວນກຳຈັດວັດສະພືດເທື່ອທຳອິດ ຫລັງຈາກປູກຫຍ້າ ແລ້ວ 3-4 ອາທິດ ແລະ ກຳຈັດວັດສະພືດຕື່ມອີກໃນເທື່ອຕໍ່ໆ ໄປເທົ່າທີ່ຈຳເປັນ.

## ການໃຫ້ນ້ຳ

ຫຍ້າກີນີ ເປັນຫຍ້າທີ່ຕອບສະໜອງຕໍ່ການໃຫ້ນ້ຳ ແລະ ປຸ໋ຍໄດ້ດີ ດັ່ງນັ້ນ, ໃນຊ່ວງລະດູແລ້ງ ຫລື ລະດູຝົນທີ່ຝົນຂາດຊ່ວງເປັນເວລາດົນນານ ຄວນມີການໃຫ້ນ້ຳ ໂດຍໃຊ້ລະບົບຝົນຝອຍ ໃນທຸກໆ 3-5 ມື້ ຫຍ້າຈະຂຽວງາມ ແລະ ໃຫ້ຜົນຜະລິດຕະຫລອດປີ.



*ການໃຫ້ນ້ຳແບບລະບົບຝົນຝອຍໃນແປງຫຍ້າ*

## ການນຳໃຊ້ປະໂຫຍດ

ເລີ່ມຕັດໃຫ້ສັດກິນເທື່ອທຳອິດ ເມື່ອຫຍ້າມີອາຍຸປະມານ 40-45 ວັນ ຫລັງຈາກປູກ ແລະ ຕັດເທື່ອຕໍ່ໄປທຸກໆ 30-35 ວັນ ໂດຍຕັດສູງຈາກໜ້າດິນ ປະມານ 10 ຊມ. ຖ້າປູກໃນພື້ນທີ່ ທີ່ອາໄສນ້ຳຝົນຢ່າງດຽວ ຈະໃຫ້ຜົນຜະລິດນ້ຳໜັກຫຍ້າສົດ ປະມານ 8-10 ໂຕນ/ໄຣ່/ປີ ແລະ ຖ້າໃນປູກເຂດຊົນລະປະທານທີ່ສາມາດໃຫ້ນ້ຳໄດ້ຕະຫລອດປີຈະໃຫ້ຜົນຜະລິດຫຍ້າສົດປະມານ12-14 ໂຕນ/ໄຣ່/ປີ.



ເອກະສານແນະນຳ

# ຫຍ້າ ກີນີສີມ່ວງ

## ພືດອາຫານສັດພັນດີ

ມີນາ 2013



**ບໍລິສັດ ໄຟຟ້ານ້ຳເທີນ 2 ຈຳກັດ**

ພະແນກສິ່ງແວດລ້ອມ ແລະ ສັງຄົມ

ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ

ໜ່ວຍງານຟື້ນຟູຊີວິດການເປັນຢູ່